ລັດຄາລິຟໍເນຍ—ອົງການບໍລິການສຸຂະພາບ ແລະ ມະນຸດ
**ພະແນກພັດທະນາການບໍລິການ**
1215 O Street, Sacramento, CA 95814
www.dds.ca.gov

NANCY BARGMANN
*ຜູ້ອໍານວຍການ*

GAVIN NEWSOM
*ຜູ້ວ່າການລັດ*

ວັນທີ 17 ພະຈິກ 2023

ເຖິງ: ບັນດາຜູ້ອໍານວຍການສູນພາກພື້ນ

ເລື່ອງ: ການສະໜອງເງິນທຶນເພື່ອສະໜັບສະໜູນ
ການຈັດຕັ້ງປະຕິບັດໂຄງການກໍານົດດ້ວຍຕົນເອງ

ອີງຕາມກົດດ້ວຍ ສະຫວັດດີການ ແລະ ສະຖາບັນ (W&I) ພາກ 4685.8(f), ທຶນໄດ້ຖືກຈັດສັນໃຫ້ສູນພາກພື້ນເພື່ອສະໜັບສະໜູນການປະຕິບັດໂຄງການການກໍານົດດ້ວຍຕົນເອງ (SDP) ສໍາລັບປີງົບປະມານ 2023-24. ຈຸດປະສົງຂອງຈົດໝາຍສະບັບນີ້ແມ່ນ ເພື່ອໃຫ້ແນວທາງກ່ຽວກັບການນໍາໃຊ້ເງິນທຶນເຫຼົ່ານີ້, ລວມທັງການຮ່ວມມືທີ່ຈໍາເປັນກັບຄະນະກໍາມະການທີ່ປຶກສາອາສາສະໝັກໃນທ້ອງຖິ່ນ (LVAC) ໃນການກໍານົດບູລິມະສິດທ້ອງຖິ່ນ ເພື່ອສະໜອງເງິນທຶນໃຫ້.

W&I ປະມວນກົດໝາຍມາດຕາ 4685.8(f) ລະບຸວ່າເງິນທຶນເຫຼົ່ານີ້ຈະຖືກນໍາໃຊ້ເພື່ອເພີ່ມຄວາມສາມາດຂອງຜູ້ເຂົ້າຮ່ວມ SDP ໃນການຊີ້ນໍາຊີວິດຂອງຕົນເອງ ແລະ ເພື່ອຮັບປະກັນໃຫ້ພະແນກ ແລະ ສູນບໍລິການໃນພາກພື້ນຈັດຕັ້ງປະຕິບັດໂຄງການຢ່າງສໍາເລັດຜົນ. ໃນລັດຖະບັນຍັດຍັງຮຽກຮ້ອງໃຫ້ພະແນກບໍລິການດ້ານພັດທະນາການ (DDS), ໃນການປຶກສາຫາລືກັບກຸ່ມຜູ້ມີສ່ວນຮ່ວມຂອງຊຸມຊົນ, ລວມທັງຄະນະກໍາມະການທີ່ຄໍາປຶກສາກ່ຽວກັບການກໍານົດດ້ວຍຕົນເອງຂອງລັດ, ຈະຕ້ອງຈັດລໍາດັບຄວາມສໍາຄັນຂອງການນໍາໃຊ້ກອງທຶນເພື່ອຕອບສະໜອງຄວາມຕ້ອງການຂອງຜູ້ເຂົ້າຮ່ວມ, ເພີ່ມທະວີການເຂົ້າເຖິງການບໍລິການ ແລະ ຄວາມສະເໝີພາບ ແລະ ຫຼຸດຜ່ອນຄວາມບໍ່ສະເໝີກັນ ແລະ ຈັດຕັ້ງປະຕິບັດໂຄງການ, ລວມທັງຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບທັງໝົດດັ່ງຕໍ່ໄປນີ້:

- ການຮັບສະໝັກ ແລະ ຝຶກອົບຮົມການວາງແຜນທີ່ຖືເອົາຄົນເປັນໃຈກາງ ແລະ ຊີ້ນໍາດ້ວຍຕົນເອງ (SD) ສະໜັບສະໜູນຜູ້ໃຫ້ບໍລິການ ແລະ ຜູ້ອໍານວຍຄວາມສະດວກທີ່ເປັນເອກະລາດ ໂດຍເນັ້ນໃສ່ການເພີ່ມຈໍານວນຜູ້ໃຫ້ການບໍລິການເປັນສອງພາສາ, ມີວັດທະນາທໍາທີ່ຫຼາກຫຼາຍ;
- ການຝຶກອົບຮົມຮ່ວມກັນສໍາລັບຜູ້ເຂົ້າຮ່ວມ, ຄອບຄົວ, ສູນບໍລິການໃນພາກພື້ນ, ສະມາຊິກ LVAC ແລະ ອື່ນໆໂດຍມຸ່ງເນັ້ນທີ່ການຝຶກອົບຮົມການສະໜັບສະໜູນຕົນເອງ ແລະ ຄອບຄົວຈາກຊຸມຊົນທີ່ຫຼາກຫຼາຍທີ່ບໍ່ໄດ້ເປັນຕົວແທນໃນ SDP;
- ການຊ່ວຍເຫຼືອໃນການພັດທະນາແຜນການໃຊ້ຈ່າຍ ແລະ
- ກຸ່ມທີ່ໃຫ້ການຮ່ວມມື/ການປະຊຸມເພື່ອສົ່ງເສີມໂອກາດການຮຽນຮູ້ແບບແບ່ງປັນ ແລະ ການແກ້ໄຂບັນຫາຢ່າງຕໍ່ຢ່າງເນື່ອງ.

DDS ຈະສະໜອງເງິນທຶນຊ່ວຍເຫຼືອຕ່າງຫາກແກ່ຄະນະກໍາມະການທີ່ປຶກສາການກໍານົດດ້ວຍຕົນເອງຂອງລັດ

ເຊິ່ງມີບົດບາດສຳຄັນໃນການໃຫ້ຄຳແນະນຳ ແລະ ແນວທາງກ່ຽວກັບການຈັດຕັ້ງປະຕິບັດ SDP ທີ່ປະສົບຜົນສຳເລັດແລ້ວ.

LVACs ມີບົດບາດສຳຄັນໃນການຈັດຕັ້ງປະຕິບັດ ແລະ ກວດກາ SDP. ດັ່ງນັ້ນ, ບັນດາສູນບໍລິການໃນພາກພື້ນ ແລະ LVACs ຕ້ອງໄດ້ເຮັດວຽກຮ່ວມກັນ ເພື່ອໃຫ້ຄວາມສຳຄັນຕໍ່ການນຳໃຊ້ເງິນທຶນທີ່ມີຢູ່ໃຫ້ບັນລຸຄວາມຕ້ອງການຂອງຜູ້ເຂົ້າຮ່ວມໃນເຂດທ້ອງຖິ່ນຂອງຕົນ. ເງິນທຶນອາດຖືກໃຊ້ຈ່າຍຫຼັງຈາກໄດ້ບັນລຸຂໍ້ຕົກລົງກ່ຽວກັບຄວາມຕ້ອງຂອງທ້ອງຖິ່ນເທົ່ານັ້ນ. ເບິ່ງ ເອກະສານຄັດຕິດ A ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບຄວາມເປັນໄປໄດ້ໃນການໃຊ້ເງິນທຶນ, ຈຳນວນເງິນທຶນທີ່ມີຢູ່ໃນຂອບເຂດສູນບໍລິການໃນພາກພື້ນແຕ່ລະແຫ່ງສຳລັບປີງົບປະມານ 2023-24 ແລະ ຄຳແນະນຳກ່ຽວກັບຂັ້ນຕອນການກຳນົດການນຳໃຊ້ເງິນທຶນ.

ຖ້າທ່ານມີຄຳຖາມກ່ຽວກັບແຈ້ງການສະບັບນີ້, ກະລຸນາຕິດຕໍ່ sdp@dds.ca.gov.

ດ້ວຍຄວາມເຄົາລົບ,

*ລົງລາຍເຊັນຕົ້ນສະບັບໂດຍ*

ປອ. VICKI L. SMITH
ຮອງຜູ້ອຳນວຍການ
ຂະແໜງການພັດທະນານະໂຍບາຍ ແລະ ແຜນງານ

ເອກະສານຄັດຕິດ

ສຳເນົາເຖິງ: ບັນດາຜູ້ບໍລິຫານໃນສູນພາກພື້ນ
ບັນດາຜູ້ອຳນວຍການສູນພາກພື້ນຂອງການບໍລິການຜູ້ບໍລິໂພກ
ບັນດາຜູ້ອຳນວຍການຝ່າຍບໍລິການຊຸມຊົນຂອງສູນປພາກພື້ນ
ບັນດາສະມາຄົມໜ່ວຍງານຂອງສູນປະຈຳເຂດ
ສະພາແຫ່ງລັດວ່າດ້ວຍຄວາມພິການດ້ານພັດທະນາການ
Nancy Bargmann, ພະແນກພັດທະນາການບໍລິການ
Brian Winfield, ພະແນກບໍລິດ້ານການພັດທະນາ
Carla Castañeda, ພະແນກບໍລິການດ້ານພັດທະນາການ
Ernie Cruz, ພະແນກບໍລິການດ້ານພັດທະນາການ
Jim Knight, ພະແນກບໍລິການດ້ານພັດທະນາການ
Suzy Requarth, ພະແນກບໍລິການດ້ານການພັດທະນາ
Kathleen Dempsey, ພະແນກບໍລິການດ້ານການພັດທະນາ

## ເອກະສານຄັດຕິດ A

## ການສະຫນອງເງິນທຶນເພື່ອສະຫນັບສະຫນູນການຈັດຕັ້ງປະຕິບັດໂຄງການກຳນົດດ້ວຍຕົນເອງ (SDP)

ດັ່ງທີ່ໄດ້ລະບຸໄວ້ໃນຈົດຫມາຍທີ່ຄັດຕິດມານີ້, ໂດຍສອດຄ່ອງກັບສະຫວັດດີການ ແລະ ສະຖາບັນ (W&I) ປະມວນກົດຫມາຍມາດຕາ 4685.8(f), ໄດ້ມີການມອບເງິນທຶນໃຫ້ແກ່ບັນດາສູນບໍລິການໃນພາກພື້ນ ເພື່ອສະຫນັບສະຫນູນການຈັດຕັ້ງປະຕິບັດໂຄງການກຳນົດດ້ວຍຕົນເອງ (SDP).
ການນຳໃຊ້ທີ່ອາດເປັນໄປໄດ້ຂອງເງິນທຶນເຫຼົ່ານີ້, ຂະບວນການພິຈາລະນະ ແລະ ນຳໃຊ້ເງິນທຶນເຫຼົ່ານີ້ ແລະ ການລາຍງານຂອງສູນພາກພື້ນໄດ້ອະທິບາຍໄວ້ຂ້າງລຸ່ມນີ້.

| ຂັ້ນຕອນ | ລາຍລະອຽດ |
|---|---|
| **ເຂດບູລິມະສິດສຳລັບການນຳໃຊ້ເງິນທຶນ** | ເຂດບູລິມະສິດທີ່ຈະໄດ້ຮັບການສະຫນອງເງິນທຶນປະກອບມີ:<br>• ***ການຮັບສະໝັກ/ຝຶກອົບຮົມການວາງແຜນທີ່ເອົາບຸກຄົນເປັນສູນກາງ ແລະ ຜູ້ໃຫ້ການຊ່ວຍເຫຼືອ SD ແລະ ຜູ້ອຳນວຍຄວາມສະດວກທີ່ເປັນເອກະລາດ*** – ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການເພີ່ມຈຳນວນຜູ້ໃຫ້ບໍລິການ ການວາງແຜນທີ່ເອົາບຸກຄົນເປັນສູງກາງ ແລະ ສະຫນັບສະຫນູນ SD ແລະ ຜູ້ອຳນວຍຄວາມສະດວກທີ່ເປັນເອກະລາດ, ໂດຍເນັ້ນໃສ່ຜູ້ທີ່ຮູ້ສອງພາສາ/ຫຼາຍພາສາ ແລະ ສອງ-/ຫຼາກຫຼາຍວັດທະນະທຳ. ນີ້ອາດຈະລວມມີ, ແຕ່ບໍ່ຈຳກັດ ສະເພາະ, ການຮັບສະໝັກ, ການພັດທະນາ ແລະ/ຫຼື ການຈັດຝຶກອົບຮົມ, ການແປເອກະສານ/ຜູ້ແປພາສາ, ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການໃຫ້ ການຝຶກອົບຮົມ ແລະ ອື່ນໆ.<br>• ***ກຸ່ມໃຫ້ການຮ່ວມມື/ການປະຊຸມ*** – ການປະຊຸມຢ່າງຕໍ່ເນື່ອງ ແລະ/ຫຼື ເປັນແຕ່ລະໄລຍະໃຫ້ກັບຜູ້ເຂົ້າຮ່ວມ ແລະ ຄອບຄົວ, ຜູ້ໃຫ້ບໍລິການ ແລະ ອື່ນໆ, ເພື່ອສະຫນອງໂອກາດໃນການຮຽນຮູ້ ແລະ ການແກ້ໄຂບັນຫາ. ຄ່າໃຊ້ຈ່າຍລວມມີ, ແຕ່ບໍ່ຈຳກັດສະເພາະ, ຄ່າໃຊ້ຈ່າຍໃນການເດີນທາງຂອງຜູ້ບັນຍາຍ/ຜູ້ນຳສະເຫນີ, ການແປເອກະສານ/ຜູ້ແປພາສາ, ວັດສະດຸ, ເຊົ່າສະຖານທີ່ ແລະ ອື່ນໆ. ນີ້ອາດຈະກ່ຽວຂ້ອງກັບການປະສານງານກັບ LVACs/ຜູ້ເຂົ້າຮ່ວມໃນດ້ານອື່ນໆ ເພື່ອເພີ່ມຂອບເຂດຂອງໂອກາດການຮຽນຮູ້/ການແບ່ງປັນຂໍ້ມູນ.<br>• ***ການຝຶກອົບຮົມຮ່ວມກັນ*** – ການຝຶກອົບຮົມໃຫ້ກັບຜູ້ເຂົ້າຮ່ວມ, ຄອບຄົວ, ພະນັກງານສູນບໍລິການໃນພາກພື້ນ ແລະ ສະມາຊິກຂອງຄະນະກຳມະການທີ່ປຶກສາອາສາສະຫມັກໃນທ້ອງຖິ່ນ ແລະອື່ນໆ, ໂດຍມຸ່ງເນັ້ນທີ່ການຝຶກອົບຮົມການສະຫນັບສະຫນູນຕົນເອງ ແລະ ຄອບຄົວຈາກຊຸມຊົນທີ່ຫຼາກຫຼາຍ ທີ່ບໍ່ໄດ້ຮັບການສະຫນັບສະຫນູນໃນໂຄງການກຳນົດດ້ວຍຕົນເອງ. ການຝຶກອົບຮົມຮ່ວມກັນ ຄວນມຸ່ງເນັ້ນໄປທີ່ໂອກາດໃນການຮຽນຮູ້ຮ່ວມກັນທີ່ເພີ່ມຄວາມເຂົ້າໃຈລວມຂອງທຸກຄົນທີ່ມີສ່ວນຮ່ວມກັບ SDP. ຄ່າໃຊ້ຈ່າຍລວມມີ, ແຕ່ບໍ່ຈຳກັດສະເພາະ, ການພັດທະນາ ແລະ/ຫຼື |

## ເອກະສານຄັດຕິດ A

| | |
|---|---|
| | ການສະໜອງການຝຶກອົບຮົມ, ການແປເອກະສານ/ຜູ້ແປພາສາ, ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການສະໜອງການຝຶກອົບຮົມ ແລະ ອື່ນໆ.<br>• ***ສະໜັບສະໜູນ/ຝຶກນໍາພາສໍາລັບການປ່ຽນຜ່ານໄປສູ່ SDP*** - ສະໜັບສະໜູນຜູ້ເຂົ້າຮ່ວມໃນການປ່ຽນຜ່ານໄປສູ່ SDP. ນີ້ອາດລວມເຖິງການສະໜັບສະໜູນໃນດ້ານຕ່າງໆເຊັ່ນ: ການຕັດສິນໃຈວ່າຮູບແບບການບໍລິການການຄຸ້ມຄອງການເງິນໃດທີ່ເຫມາະສົມທີ່ສຸດສໍາລັບຜູ້ເຂົ້າຮ່ວມ, ຄໍາແນະນໍາສໍາລັບການຮັບສະໝັກ/ການຈ້າງພະນັກງານ, ວິທີການສ້າງແຜນສໍາຮອງພະນັກງານ ແລະ ອື່ນໆ.<br>• ***ການພັດທະນາແຜນການໃຊ້ຈ່າຍໃນເບື້ອງຕົ້ນ*** – ສະໜັບສະໜູນການພັດທະນາການນໍາໃຊ້ງົບປະມານສ່ວນບຸກຄົນຂອງຜູ້ເຂົ້າຮ່ວມ ໂດຍຜ່ານແຜນການໃຊ້ຈ່າຍຂອງເຂົາເຈົ້າ, ເຊິ່ງອາດລວມມີການປຶກສາຫາລືກັບອົງການບໍລິຫານການເງິນ.<br>• ***ຄວາມຕ້ອງການເພີ່ມເຕີມທີ່ໄດ້ກໍານົດ*** – ລາຍການ/ກິດຈະກໍາທີ່ຈະສະໜັບສະໜູນຄວາມຕ້ອງການຂອງຜູ້ເຂົ້າຮ່ວມ ແລະ ການຈັດຕັ້ງປະຕິບັດໂຄງການ. |
| **ກໍານົດວ່າເງິນທຶນຄວນຖືກໃຊ້ແນວໃດ** | LVAC ແລະ ສູນບໍລິການພາກພື້ນຄວນຮ່ວມກັນປະເມີນຄວາມຕ້ອງການຂອງທ້ອງຖິ່ນໃນການຈັດຕັ້ງປະຕິບັດ SDP ເພື່ອກໍານົດການນໍາໃຊ້ທີ່ດີທີ່ສຸດຂອງເງິນທຶນທີ່ມີໃຫ້. ໂດຍອີງຕາມການປະເມີນຮ່ວມກັນນີ້, ຕ້ອງໄດ້ມີການພັດທະນາລາຍການຂອງເຂດບູລິມະສິດ (ຂ້າງເທິງ) ທີ່ຈະໄດ້ຮັບທຶນ, ລວມທັງຈໍານວນເງິນທີ່ຄາດວ່າຈະນໍາໃຊ້ສໍາລັບແຕ່ລະພື້ນທີ່ທີ່ໄດ້ຄັດເລືອກ. ລາຍລະອຽດ, ການຈັດລຽງລາຍການສໍາລັບແຕ່ລະພື້ນທີ່ທີ່ລະບຸໄວ້ແມ່ນຍັງບໍ່ມີຄວາມຈໍາເປັນໃນຈຸດນີ້. ເຖິງຢ່າງໃດກໍ່ຕາມ, ການສົນທະນາກ່ຽວກັບຄ່າໃຊ້ຈ່າຍເຫຼົ່ານີ້ບາງຢ່າງໂດຍລະອຽດອາດຊ່ວຍແຈ້ງໃຫ້ຮູ້ເຖິງການຄາດຄະເນໄດ້.<br><br>ເມື່ອໄດ້ບັນລຸຂໍ້ຕົກລົງກ່ຽວກັບການນໍາໃຊ້ເງິນທຶນແລ້ວ, LVAC ແລະ ສູນບໍລິການໃນພາກພື້ນຕ້ອງຮ່ວມກັນລາຍງານສິ່ງຕໍ່ໄປນີ້ໃຫ້ກັບ sdp@dds.ca.gov:<br><br>• ລາຍຊື່ເຂດບູລິມະສິດທີ່ຈະໄດ້ຮັບການສະໜອງທຶນ;<br>• ຄາດຄະເນຈໍານວນເງິນທຶນທີ່ໄດ້ມອບໃຫ້ເຂດບູລິມະສິດແຕ່ລະແຫ່ງ ແລະ<br>• ອະທິບາຍຫຍໍ້ກ່ຽວກັບວິທີທີ່ນໍາໃຊ້ໃນການຕັດສິນໃຈ. |

### ເອກະສານຄັດຕິດ A

| | |
|---|---|
| | ການປ່ຽນແປງສາມາດເຮັດໄດ້ຢ່າງຕໍ່ເນື່ອງຫາກຄວາມຕ້ອງການຂອງຜູ້ເຂົ້າຮ່ວມມີການປ່ຽນແປງ. ເຖິງຢ່າງໃດກໍ່ຕາມ, ການນໍາໃຊ້ເງິນທຶນຍັງຄົງຕ້ອງໃຫ້ສອດຄ່ອງກັບບົດບັນຍັດ ແລະ ແນວທາງນີ້ ແລະ ການຕັດສິນໃຈກ່ຽວກັບການປ່ຽນແປງໃດໆກໍຕາມຕ້ອງໄດ້ຮ່ວມມືກັນໂດຍ LVAC ແລະ ສູນບໍລິການໃນພາກພື້ນ. |
| **ການໄຫຼຂອງເງິນທຶນ** | ຈໍານວນເງິນທຶນທີ່ລະບຸໄວ້ໃນຫນ້າຕໍ່ໄປນີ້ໄດ້ຖືກມອບໃຫ້ສູນບໍລິການໃນພາກພື້ນແຕ່ລະແຫ່ງ. ດັ່ງທີ່ໄດ້ລະບຸໄວ້ກ່ອນຫນ້ານີ້, ການຕັດສິນໃຈກ່ຽວກັບການນໍາໃຊ້ເງິນທຶນເຫຼົ່ານີ້ຕ້ອງໄດ້ເຮັດຮ່ວມກັນໂດຍ LVAC ແລະ ສູນບໍລິການໃນພາກພື້ນ. ຕໍ່ຈາກນັ້ນ ສູນບໍລິການໃນພາກພື້ນຈະຈ່າຍເງິນຄືນໃຫ້ກັບບຸກຄົນ/ອົງການຕ່າງໆທີ່ໃຫ້ບໍລິການ. |
| **ການຕິດຕາມກວດກາ** | ສູນພາກພື້ນຕ້ອງໄດ້ລາຍງານສະຖານະຂອງແຕ່ລະໂຄງການໃນປະຈຸບັນກ່ອນເປີດງົບປະມານ (FY 2021-22 ແລະ FY 2022-23) ພາຍໃນວັນທີ 31 ມັງກອນ 2024. ການລາຍງານຕໍ່ເນື່ອງຄວນຈະລາຍງານທຸກໆຫົກເດືອນສໍາລັບແຕ່ລະໂຄງການກ່ອນເປີດປີງົບປະມານ FY. ບົດລາຍງານດັ່ງກ່າວແມ່ນມີກໍານົດພາຍໃນ 30 ວັນຫຼັງຈາກວັນທີສິ້ນສຸດຂອງໄລຍະເວລາລາຍງານຫົກເດືອນ. ພະແນກຈະສົ່ງຄໍາເຕືອນເມື່ອຮອດກໍານົດການລາຍງານ ແລະ ຈະສົ່ງລິ້ງທີ່ເຊື່ອມຕໍ່ກັບພື້ນທີ່ລາຍງານໄປຫາສູນພາກພື້ນຜ່ານທາງອີເມວພາຍໃນສອງອາທິດຈາກຄໍາແນະນໍານີ້. |

# ເອກະສານຄັດຕິດ A

ກອງທຶນພື້ນຖານໄດ້ຖືກຈັດສັນເທົ່າກັນໃນບັນດາສູນພາກພື້ນທີ່ມີກອງທຶນທີ່ຍັງເຫຼືອຖືກຈັດສັນ
ໂດຍອີງໃສ່ສ່ວນແບ່ງຂອງຜູ້ບໍລິໂພກທີ່ມີການເຄື່ອນໄຫວ (ສະຖານະພາບ 2)
ທີ່ບໍ່ແມ່ນສີຂາວຢູ່ໃນແຕ່ລະສູນກາງພາກພື້ນ.

**ເງິນທຶນສະໜັບສະໜູນຜູ້ເຂົ້າຮ່ວມ SDP - ປີງົບປະມານ 2023/2024 ***

| ສູນພາກພື້ນ | ກອງທຶນພື້ນຖານ | ການແບ່ງປັນເງິນທຶນຂອງຜູ້ບໍລິໂພກທີ່ມີການເຄື່ອນໄຫວທີ່ກໍານົດຕົນເອງວ່າບໍ່ແມ່ນສີຂາວ** | ເງິນທຶນທີ່ມີຢູ່ |
|---|---:|---:|---:|
| ACRC | $47,620 | $60,664.74 | $108,284.74 |
| CVRC | $47,620 | $68,868.43 | $116,488.43 |
| ELARC | $47,620 | $44,737.94 | $92,357.94 |
| FDLRC | $47,620 | $29,371.16 | $76,991.16 |
| FNRC | $47,620 | $9,148.19 | $56,768.19 |
| GGRC | $47,620 | $24,941.25 | $72,561.25 |
| HRC | $47,620 | $50,496.83 | $98,116.83 |
| IRC | $47,620 | $121,734.85 | $169,354.85 |
| KRC | $47,620 | $31,907.91 | $79,527.91 |
| NBRC | $47,620 | $20,239.69 | $67,859.69 |
| NLACRC | $47,620 | $82,492.51 | $130,112.51 |
| RCEB | $47,620 | $65,520.92 | $113,140.92 |
| RCOC | $47,620 | $58,211.57 | $105,831.57 |
| RCRC | $47,620 | $5,048.43 | $52,668.43 |
| SARC | $47,620 | $48,010.23 | $95,630.23 |
| SCLARC | $47,620 | $68,730.52 | $116,350.52 |
| SDRC | $47,620 | $98,319.00 | $145,939.00 |
| SGPRC | $47,620 | $45,331.39 | $92,951.39 |
| TCRC | $47,620 | $34,611.83 | $82,231.83 |
| VMRC | $47,620 | $43,363.00 | $90,983.00 |
| WRC | $47,620 | $28,238.61 | $75,858.61 |
| ລວມ | **$1,000,020** | **$1,039,989** | **$2,040,009** |

* ເງິນທຶນຈະຕ້ອງໃຊ້ຈ່າຍພາຍໃນເດືອນມີນາ 2026.

** ແຫຼ່ງທີ່ມາຂອງຂໍ້ມູນນີ້ແມ່ນ Client Master File,
ແຫຼ່ງຂໍ້ມູນຫຼັກສໍາລັບຂໍ້ມູນສະຖານະການກໍລະນີຂອງບຸກຄົນທີ່ໄດ້ສະໝັກຂໍເອົາການບໍລິການທີ່ໄດ້ຮັບທຶນຈາກພະແນກ ແລະ ຜູ້ທີ່ກໍາລັງໃຫ້ບໍລິການໃນເດືອນມິຖຸນາ 2023.